## Special Economic Zone, Lecture ninth: Private development

### 1. ເອກະຊົນລົງທຶນພັດທະນາຮ້ອຍສ່ວນຮ້ອຍ:

ການລົງທຶນພັດທະນາ ໂດຍເອກະຊົນຮ້ອຍສ່ວນຮ້ອຍ ( 100% ) ແມ່ນເຂດເສດຖະກິດພິເສດ ທີ່ເອກະຊົນພາຍໃນ ຫຼື ຕ່າງ ປະເທດ ເປັນຜູ້ລົງທຶນພັດທະນາພື້ນຖານໂຄງລ່າງ ແລະ ສິ່ງສາທາລະນຸປະໂພກທັງໝົດຂອງເຂດດ້ວຍງົບປະມານຂອງຜູ້ພັດທະນາເອງ ສໍາລັບການຄຸ້ມຄອງບໍລິຫານ ແມ່ນຮູບແບບສະພາບໍລິຫານ ທີ່ປະກອບດ້ວຍຜູ້ບໍລິຫານຈາກ ພາກລັດ ແລະ ພາກເອກະຊົນ ບົນພື້ນຖານການຈັດຕັ້ງ ແລະ ເຄື່ອນໄຫວ ຕາມສິດ, ໜ້າທີ່ ແລະ ພາລະບົດບາດຂອງແຕ່ລະຝ່າຍ.

ການພັດທະນາ ເຂດເສດຖະກິດພິເສດ ປະກອບດ້ວຍ:

1) ການສ້າງແຜນປະຕິບັດງານຮອບດ້ານ;
2) ການພັດທະນາພື້ນຖານໂຄງລ່າງ ຂພສ;
3) ການຈັດຕັ້ງປະຕິບັດວຽກງານພັດທະນາ ແລະ ຄຸ້ມຄອງ ຂພສ.

**ການສ້າງແຜນປະຕິບັດງານຮອບດ້ານ:**

ຄະນະບໍລິຫານ ຫຼື ສະພາບໍລິຫານ ຂພສ ແລະ ຜູ້ພັດທະນາເປັນຜູ້ຄົ້ນຄວ້າ ແລະ ສ້າງແຜນປະຕິບັດງານຮອບດ້ານ ໂດຍອີງໃສ່ແຜນແມ່ບົດການພັດທະນາຂອງ ຂພສ ເປັນແຕ່ລະໄລຍະ, ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວເປັນຕົ້ນແຜນພັດທະນາ ແລະ ນໍາໃຊ້ທີ່ດິນ, ແຜນພັດທະນາພື້ນຖານໂຄງລ່າງ, ການຂະຫຍາຍຕົວເມືອງ, ການສ້າງເຂດຊຸມຊົນ ໃໝ່, ເຂດທ່ອງທ່ຽວ, ເຂດວັດທະນະທໍາ, ການສຶກສາ, ສາທາລະນະສຸກ, ກະສິກໍາ, ອຸດສາຫະກໍາ, ແຜນຜະລິດສິນຄ້າສົ່ງອອກ, ແຜນການດຶງດູດການລົງທຶນ, ແຜນການຕະຫຼາດ, ແຜນງານບຸກຄະລາກອນ ແລະ ແຮງງານ, ແຜນງົບປະມານ ແລະ ອື່ນໆ.

**ການພັດທະນາພື້ນຖານໂຄງລ່າງ ຂພສ:**

ການພັດທະນາພື້ນຖານໂຄງລ່າງ ຂພສ ໃຫ້ປະຕິບັດດັ່ງນີ້:

- ຜູ້ພັດທະນາ ຂພສ ຕ້ອງດໍາເນີນການກໍ່ສ້າງພື້ນຖານໂຄງລ່າງທັງໝົດ ເພື່ອອໍານວຍຄວາມສະດວກໃຫ້ແກ່ການດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດເຂົ້າໃນເຂດ, ເຂດເຊື່ອມຕໍ່ລະຫວ່າງ ຂພສ ແລະ ທ້ອງຖິ່ນ, ເຂດປ່າສະຫງວນແຫ່ງຊາດຕາມແຜນແມ່ບົດການພັດທະນາ, ເຂດອະນຸລັກ ແລະ ເຂດອື່ນຕາມທີ່ລັດຖະບານໄດ້ຮັບຮອງເອົາ.
- ພື້ນຖານໂຄງລ່າງທີ່ຈໍາເປັນ ປະກອບດ້ວຍທາງຫຼວງ, ທາງຊອຍ, ທາງເຊື່ອມຕໍ່ຂອງເຂດ, ລະບົບໄຟຟ້າ, ນໍ້າປະປາ, ລະບົບບໍາບັດນໍ້າເສຍ, ກໍາຈັດຂີ້ເຫຍື້ອ, ຕາຝັ່ງກັນເຈື່ອນ, ທ່າເຮືອ, ດ່ານຂາເຂົ້າ-ອອກເມືອງ, ຕາໜ່າງພາຍໃນເຂດ, ພື້ນຖານໂຄງລ່າງທາງດ້ານການສຶກສາ, ສາທາລະນະສຸກ, ວັດທະນະທໍາ-ສັງຄົມ, ໂທລະຄົມມະນາຄົມ ແລະ ອື່ນໆ ຊຶ່ງມີມາດຕະຖານລະດັບສູງ ( ຫຼີກເວັ້ນການກໍ່ສ້າງຫຼຸດມາດຕະຖານ ທີ່ລັດຖະບານກໍານົດ ).
- ແຫຼ່ງທຶນພັດທະນາພື້ນຖານໂຄງລ່າງ ແມ່ນຄວາມຮັບຜິດຊອບຂອງຜູ້ພັດທະນາ ຊຶ່ງອາດຈະໄດ້ມາຈາກທຶນຂອງຜູ້ພັດທະນາ ຫຼື ທຶນກູ້ຢືມຂອງຜູ້ພັດທະນາ ຫຼື ລາຍຮັບທີ່ເກີດຂຶ້ນໃນການບໍລິຫານ ຂພສ ຕາມອັດຕາສ່ວນການແບ່ງປັນທີ່ໄດ້ກໍານົດໄວ້ໃນສັນຍາສໍາປະທານ.

**ການຈັດຕັ້ງປະຕິບັດວຽກງານພັດທະນາ:**

ການຈັດຕັ້ງປະຕິບັດວຽກງານພັດທະນາ ຂພສ ຕ້ອງຕິດພັນກັບໜ້າວຽກທີ່ສໍາຄັນດັ່ງນີ້:

- ການຄົ້ນຄວ້າ ແລະ ວາງແຜນການພັດທະນາ ຂພສ ເປັນແຕ່ລະໄລຍະ (ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ) ພ້ອມກັບການປະເມີນ ແລະ ການວິໄຈຜົນໄດ້ຮັບ.

- ການຄົ້ນຄວ້າ ແລະ ກຳນົດນະໂຍບາຍສົ່ງເສີມການພັດທະນາ ຂພສ ລວມທັງກົນໄກການປະສານງານກັບຂະແໜງ ການຕ່າງໆ.

- ການຄົ້ນຄວ້າເຕັກນິກວິຊາການ ແລະ ມາດຕະການປົກປັກຮັກສາສິ່ງແວດລ້ອມ.

- ການພັດທະນາ ຂພສ ດ້ວຍລະບຽບກົດໝາຍ ແລະ ແຜນການຈັດສັນເຂດພື້ນທີ່.

- ການຄົ້ນຄວ້າເພື່ອສ້າງກົນໄກການຄຸ້ມຄອງ-ບໍລິຫານ ແລະ ການເງິນ ຂອງ ຂພສ ໃຫ້ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້.

- ການພົວພັນຮ່ວມມືດ້ານເຕັກນິວິຊາການ ແລະ ການແລກປ່ຽນບົດຮຽນກັບສາກົນ.

**ສິ່ງທີ່ຄວນເອົາໃຈໃສ່**: ອາຍຸສຳປະທານທີ່ດິນ ເພື່ອພັດທະນາ ແມ່ນອີງຕາມປະເພດ, ຂະໜາດ, ມູນຄ່າການລົງທຶນ, ເງື່ອນໄຂ, ບົດວິພາກເສດຖະກິດ-ເຕັກນິກຂອງກິດຈະການຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ, ແຕ່ສູງສຸດບໍ່ໃຫ້ເກີນ 50 ປີ ແລະ ສາມາດຕໍ່ໄດ້ຕາມການຕົກລົງກັບລັດຖະບານ[1]

## 2. ການລົງທຶນໃນ ຂພສ

ການຍື່ນຄຳຮ້ອງຂຶ້ນທະບຽນວິສາຫະກິດ ໃນ ຂພສ ໝາຍຄວາມວ່າ ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງລົງທຶນຢູ່ໃນເຂດເສດຖະກິດພິເສດ ຫຼື ເຂດເສດຖະກິດສະເພາະ ທີ່ໄດ້ຮັບການສ້າງຕັ້ງຂຶ້ນແລ້ວໃຫ້ ຍື່ນຄຳຮ້ອງຂໍຂຶ້ນທະບຽນຕໍ່ ຄະນະບໍລິຫານ ຫຼື ສະພາບໍລິຫານຕາມແບບພິມທີ່ແຕ່ລະເຂດໄດ້ກຳນົດອອກ.

ຜູ້ລົງທຶນສາມາດຍື່ນຄຳຮ້ອງຂໍຂຶ້ນທະບຽນວິສາຫະກິດໂດຍຜ່ານໂທລະສານ, ຈົດໝາຍອີເລັກໂຕຣນິກ ຫຼື ຍື່ນໂດຍກົງຕໍ່ຫ້ອງການຄຸ້ມຄອງ ຂພສ.

- ການພິຈາລະນາອອກໃບທະບຽນວິສາຫະກິດໃນ ຂພສ: ຄະນະບໍລິຫານ ຫຼື ສະພາບໍລິຫານ ຂພສ ດຳເນີນການພິຈາລະນາຄຳຮ້ອງຂຶ້ນທະບຽນໂດຍຜ່ານການກວດກາເອກະສານປະກອບ ຂັ້ນຕອນ ແລະ ກຳນົດເວລາຕາມທີ່ ໄດ້ລະບຸໄວ້ໃນລະບຽບການ ຂພສ, ຄູ່ມືຂອງການລົງທຶນ ໃນ ຂພສ.

- ການອອກໃບທະບຽນວິສາຫະກິດ: ຄະນະບໍລິຫານ ຫຼື ສະພາບໍລິຫານ ເປັນຜູ້ອອກໃບທະບຽນວິສາຫະກິດ ໃຫ້ຜູ້ລົງທຶນຢູ່ພາຍໃນ ຂພສ, ໃບທະບຽນວິສາຫະກິດນີ້ ມີລະຫັດເລກປະຈຳຕົວຜູ້ເສຍອາກອນຕາມກົດໝາຍວ່າດ້ວຍສ່ວຍສາອາກອນ, ເມື່ອໄດ້ໃບທະບຽນວິສາຫະກິດແລ້ວ, ຫົວໜ່ວຍວິສາຫະກິດດັ່ງກ່າວສາມາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍຂອງ ສປປ ລາວ.

**ສິ່ງທີ່ຄວນເອົາໃຈໃສ່:** ຜູ້ລົງທຶນໃນ ຂພສ ມີສິດໄດ້ຮັບນະໂຍບາຍພິເສດ ແລະ ປະຕິບັດພັນທະຕາມທີ່ກຳນົດໄວ້ໃນດຳລັດ, ສ່ວນສິດ ແລະ ພັນທະອື່ນໆຂອງຜູ້ລົງທຶນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງ ເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ[2].

ການພັດທະນາ ໃນ ຂພສ ແມ່ນຄະນະບໍລິຫານ ແລະ ສະພາບໍລິຫານເສດຖະກິດ ຂພສ ອອກລະບຽບການຄຸ້ມຄອງ ໃຫ້ສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ ໂດຍໃຫ້ບັນລຸເປົ້າໝາຍສະຫັດສະວັດຂອງສັງຄົມ, ຮັບປະກັນສິ່ງແວດລ້ອມ, ຄວາມສະຫງົບປອດໄພ ແລະ ການພັດທະນາແບບຍືນຍົງ.

ແນວໃດກໍ່ຕາມ, ການບໍລິຫານພາຍໃນ ຂພສ ຜູ້ບໍລິຫານຕ້ອງດຳເນີນຕາມຫຼັກການພື້ນຕໍ່ດັ່ງນີ້: 1) ນິຕິກຳສະເພາະຂອງ ຂພສ; 2) ສັນຍາສຳປະທານລະຫວ່າງ ລັດຖະບານ ແລະ ຜູ້ພັດທະນາ; 3) ໂປ່ງໃສ; 4) ສາມາດກວດສອບໄດ້; 5) ມີປະສິດທິຜົນ; 6) ປອດສານເຄມີ; 7) ຮັກສາສິ່ງແວດລ້ອມ; 8) ພັດທະນາແບບຍືນຍົງ.

[1] ມາດຕາ 61, ກົດໝາຍວ່າການສົ່ງເສີມການລົງທຶນ, ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016

[2] ມາດຕາ 29, ດຳລັດວ່າດ້ວຍເຂດເສດຖະກິດພິເສດ, ສະບັບເລກທີ 188/ລບ, ລົງວັນທີ 7ມິຖຸນາ 2018

ການພັດທະນາເຂດເສດຖະກິດພິເສດ ໂດຍເອກະຊົນເປັນຜູ້ລົງທຶນພັດທະນາລົງທຶນພັດທະນາເອງທັງໝົດນັ້ນ, ໝາຍຄວາມວ່າຜູ້ພັດທະນາເປັນຜູ້ຮັບຜິດຊອບໃນການລົງທຶນພັດທະນາພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ດ້ວຍງົບປະມານຂອງຕົນເອງ ແລະ ຂຶ້ນແຜນການພັດທະນາ ເປັນຕົ້ນແມ່ນການສ້າງແຜນພັດທະນາຮອບດ້ານ, ການສ້າງແຜນພັດທະນາພື້ນຖານໂຄງລ່າງ, ການຈັດຕັ້ງປະຕິບັດວຽກງານພັດທະນາ ແລະ ຄຸ້ມຄອງ ເຂດເສດຖະກິດພິເສດ.

ໃນການສ້າງແຜນປະຕິບັດງານຮອບດ້ານນັ້ນ ຜູ້ພັດທະນາ ແລະ ສະພາບໍລິຫານ ເປັນຜູ້ຄົ້ນຄ້ວາ ແລະ ສ້າງແຜນການພັດທະນາ ໂດຍອີງໃສ່ແຜນແມ່ບົດການພັດທະນາໃນແຕ່ໄລຍະ, ໝາຍຄວາມວ່າເປັນຜົນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນແມ່ບົດທີ່ລັດຖະບານໄດ້ເຊັນຮັບຮອງ ເປັນຕົ້ນແມ່ນແຜນນຳໃຊ້ທີ່ດິນ ແລະ ການພັດທະນາພື້ນຖານໂຄງລ່າງ, ການກຳນົດເຂດພັດທະນາ, ການຂະຫຍາຍຕົວເມືອງ, ການສ້າງເຂດຊຸມຊົນໃໝ່, ເຂດການທ່ອງທ່ຽວ ແລະ ເຂດວັດທະນະທຳ. ວຽກງານເຫຼົ່ານີ້ ລ້ວນແຕ່ເປັນວຽກງານທີ່ສຳຄັນໃນການພັດທະນາເຂດເສດຖະກິດພິເສດ, ເນື່ອງຈາກວ່າການສ້າງຕັ້ງເຂດເສດຖະກິດພິເສດ ແມ່ນການກຳນົດໃຫ້ເຂດດັ່ງກ່າວນັ້ນເປັນເຂດທີ່ມີການພັດທະນາຮອບດ້ານ, ເປັນການສ້າງຕົວເມືອງ  ໃໝ່ທີ່ທັນສະໄໝ, ເປັນເຂດທີ່ນຳໃຊ້ເຕັກໂນໂລຊີສູງເຂົ້າໃນການພັດທະນາ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໃນເຂດນັ້ນມີການເປັນຢູ່ທີ່ດີ ແລະ ມີສ່ວນຮ່ວມໃນການພັດທະນາ, ການກຳນົດເຂດວັດທະນາທຳໃນເຂດເສດຖະກິດພິເສດນັ້ນ ກໍ່ເປັນຈຸດໜຶ່ງທີ່ມີຄວາມສຳຄັນ ແລະ ເຮັດໃຫ້ເຂດດັ່ງກ່າວນັ້ນມີຄວາມໜ້າສົນໃຈ ແລະ ເຮັດໃຫ້ປະຊາຊົນໄດ້ມີສ່ວນຮ່ວມໃນເຂດຫຼາຍຂຶ້ນ, ໃນຂະນະດຽວກັນກໍ່ເປັນການອະນຸລັກ ແລະ ສົ່ງເສີມວັດທະນາທຳອັນດີງາມຂອງຊາດ.

ນອກຈາກນີ້, ກໍມີຫຼາຍວຽກງານ ທີ່ຜູ້ພັດທະນາຕ້ອງໄດ້ຄົ້ນຄ້ວາ ແລະ ເອົາໃສ່ສ້າງແຜນພັດທະນາໃຫ້ປະກົດຜົນເປັນຈິງ ເຊັ່ນ: ແຜນການດຶງດູດການລົງທຶນ, ແຜນການຕະຫຼາດ, ແຜນງົບປະມານ ແລະ ແຜນການສ້າງບຸກຄະລະກອນ. ການດຶງດູດການລົງທຶນ ໃຫ້ຜູ້ລົງທຶນມາລົງທຶນຢູ່ໃນເຂດດັ່ງກ່າວ ກໍ່ເປັນອີກວຽກງານໜຶ່ງທີ່ສຳຄັນ ແລະ ຈຳເປັນສຳລັບ ເຂດເສດຖະກິດພິເສດ, ໃນການທີ່ລັດຖະບານໄດ້ມີການກຳນົດເງື່ອນໄຂ ແລະ ຄັດເລືອກເອົາຜູ້ພັດທະນາຈາກພາກເອກະຊົນ ກໍ່ເພື່ອເຮັດໃຫ້ການສ້າງຕັ້ງ ແລະ ພັດທະນາເຂດໄດ້ຮັບຜົນສຳເລັດ, ການຄັດເລືອກຜູ້ພັດທະນາທີ່ມີບົດຮຽນ ແລະ ປະສົບການໃນການພັດທະນາເຂດທີ່ມີຄວາມສຳເລັດໃນລະດັບສາກົນນັ້ນ ຍ່ອມມີແຜນການທີ່ດີ ແລະ ມີວິທີດຶງດູດຜູ້ລົງທຶນໃຫ້ມາລົງທຶນຢູ່ໃນເຂດດັ່ງກ່າວຕາມແຜນແມ່ບົດການພັດທະນາ, ບໍ່ວ່າຈະເປັນວຽກງານດ້ານກະສິກຳ, ວຽກງານດ້ານສາທາລະນະສຸກ, ວຽກງານການສຶກສາ ແລະ ວຽກງານອື່ນໆ ທີ່ໄດ້ກຳນົດໄວ້ໃນແຜນການພັດທະນາ.

ຈາກບົດຮຽນ ແລະ ປະສົບການຂອງການພັດທະນາເຂດເສດຖະກິດພິເສດ ໂດຍສະເພາະຜູ້ພັດທະນາທີ່ເປັນເອກະຊົນນັ້ນ ມັກຈະການເປັນຜູ້ລົງທຶນເອງໃນເຂດທີ່ຕົນໄດ້ພັດທະນາຂຶ້ນ, ນອກຈາກນີ້, ຜູ້ພັດທະນາເອກະຊົນສ່ວນຫຼາຍແລ້ວຈະມີເຄືອຄ່າຍທີ່ກວ້າງຂວາງ ແລະ ສາມາດຶງດູດໃຫ້ຜູ້ລົງທຶນມາລົງທຶນໃນເຂດທີ່ຕົນພັດທະນາຢູ່, ສະເພາະແຜນງົບປະມານ ຜູ້ພັດທະນາເປັນຜູ້ຮັບຜິດຊອບໃນການຂຶ້ນແຜນງົບປະມານຂອງຕົນເອງເພື່ອນຳໃຊ້ເຂົ້າໃນວຽກງານການພັດທະນາເຂດຕາມແຜນແມ່ບົດທີ່ລັດຖະບານໄດ້ເຊັນຮັບຮອງ. ນອກຈາກນີ້, ຜູ້ພັດທະນາຕ້ອງມີແຜນໃນການສ້າງບຸກຄະລະກອນ, ເປັນຕົ້ນແມ່ນການຈັດຝຶກອົບຮົມ ແລະ ຍົກລະດັບທາງດ້ານສີມືແຮງງານໃຫ້ປະຊາຊົນ ຫຼື ແຮງງານພາຍໃນປະເທດ.

ຜູ້ພັດທະນາຕ້ອງດຳເນີນການພັດທະນາພື້ນຖານໂຄງລ່າງທັງໝົດ ຕາມແຜນແມ່ບົດການພັດທະນາ ທີ່ລັດຖະບານໄດ້ຮັບຮອງເອົາ ເພື່ອອຳນວຍຄວາມສະດວກໃຫ້ແກ່ການດຶງດູດການລົງທຶນ ເຊິ່ງພື້ນຖານໂຄງລ່າງທີ່ຈຳເປັນ ປະກອບດ້ວຍ ທາງຫຼວງ, ທາງຊອຍ, ທາງເຊື່ອມຕໍ່, ລະບົບໄຟຟ້ານ້ຳປະປາ ແລະ ລະບົບບຳບັດນ້ຳເສຍ. ການພັດທະນາພື້ນຖານໂຄງລ່າງຕ້ອງໃຫ້ເປັນໄປຕາມແຜນແມ່ບົດການພັດທະນາ ແລະ ໃຫ້ໄດ້ຕາມມາດຕາຖານທີ່

ລັດຖະບານກຳນົດ. ໂດຍລວມແລ້ວການພັດທະນາເຂດເສດຖະກິດພິເສດ ແມ່ນໂຄງການພັດທະນາຂະໜາດໃຫຍ່ ແລະ ນຳໃຊ້ພື້ນທີ່ເປັນວົງກ້ວາງ ແລະ ເປັນໂຄງການໄລຍະຍາວ. ສະນັ້ນ, ລະບົບຖະໜົນຫົນທາງ, ລະບົບໄຟຟ້ານໍ້າປະປາ ແລະ ລະບົບບຳບັດນ້ຳເສຍ ຕ້ອງໄດ້ເອົາໃຈໃສ່ ແລະ ຮັບປະກັນໃຫ້ເປັນລະບົບທີ່ໄດ້ມາດຕະຖານ ເພື່ອບໍ່ໃຫ້ມີຜົນກະທົບຕໍ່ກັບການລົງທຶນໃນເຂດດັ່ງກ່າວ. ຕ້ອງຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການດຳລົງຊີວິດຂອງປະຊາຊົນ ໂດຍສະເພາະແມ່ນລະບົບບຳບັດນ້ຳເສຍແມ່ນມີຄວາມສຳຄັນຫຼາຍ, ເນື່ອງຈາກວ່າເຂດດັ່ງກ່າວໄດ້ກຳນົດໃຫ້ເປັນເຂດພັດທະນາອຸດສະຫະກຳ, ສະນັ້ນ ຜູ້ພັດທະນາຕ້ອງໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນໃນວຽກງານດັ່ງກ່າວ, ພ້ອມທັງພັດທະນາໃຫ້ໄດ້ມາດຕະຖານ ແລະ ຫຼີກລ່ຽງຜົນກະທົບທີ່ຈະເກີດຂຶ້ນໃນອະນາຄົດ. ໃນການຈັດຕັ້ງປະຕິບັດ ວຽກງານພັດທະນາ ຜູ້ພັດທະນາ, ຄະນະບໍລິຫານເຂດ ຕ້ອງໄດ້ຄົ້ນຄ້ວາ ແລະ ກຳນົດນະໂຍບາຍສົ່ງເສີມການພັດທະນາ ລວມທັງກົນໄກການປະສານງານກັບຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ປະສານກັບອົງການປົກຄອງທ້ອງຖິ່ນກ່ຽວກັບວຽກງານຈັດສັນພື້ນທີ່ ຫຼື ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ການລົງທຶນພັດພັດທະນາເຂດເສດຖະກິດພິເສດ ໂດຍທີ່ພາກເອກະຊົນເປັນຜູ້ລົງທຶນເອງທັງໝົດນັ້ນ ໝາຍຄວາມວ່າຜູ້ພັດທະນາພາກເອງກະຊົນຕ້ອງເປັນເຈົ້າການໃນການພັດທະນາເຂດດ້ວຍຕົນເອງ ຕາມແຜນແມ່ບົດ, ແຜນການພັດທະນາ ທີ່ລັດຖະບານໄດ້ເຊັນຮັບຮອງ ແລະ ນຳໃຊ້ງົບປະມານຂອງຕົນເອງເຂົ້າໃນການພັດທະນາພື້ນຖານໂຄງລ່າງ ແລະ ແຜນການພັດທະນາອື່ນຂອງເຂດ. ແນວໃດກໍ່ຕາມ ຜູ້ພັດທະນາເອກະຊົນ ຈະສາມາດລົງທຶນພັດທະນາເຂດເສດຖະກິດພິເສດໄດ້ ກໍ່ຕ້ອງໄດ້ຜ່ານ ຂັ້ນຕອນການຄັດເລືອກຕາມລະບຽບກົດໝາຍຂອງ ສປປລາວ, ໝາຍຄວາມວ່າຜູ້ພັດທະນາຕ້ອງໄດ້ມີມາດຖານເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນດຳລັດເຂດເສດຖະກິດພິເສດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ. ຜູ້ພັດທະນາຕ້ອງໄດ້ປະກອບເອກະສານຕາມແບບຟອມ ທີ່ໜ່ວຍງານຮັບຜິດຊອບເປັນຜູ້ກຳນົດໄວ້, ລວມເຖິງແຜນແມ່ບົດການພັດທະນາ ແລະ ບົດບັນທຶກຄວາມເຂົ້າໃຈ ລະຫວ່າງຜູ້ພັດທະນາ ແລະ ລັດຖະບານ.

ພາຍຫຼັງທີ່ໄດ້ຮັບການອະນຸມັດຢ່າງເປັນທາງການຈາກລັດຖະບານໃຫ້ພັດທະນາເຂດແລ້ວ, ຜູ້ພັດທະນາຕ້ອງໄດ້ຮີບຮ້ອນ ປະສານສົມທົບກັບໜ່ວຍງານທີ່ກ່ຽວຂ້ອງເພື່ອຜັນຂະຫຍາຍແຜນແມ່ບົດ ແລະ ລົງມືຈັດຕັ້ງປະຕິບັດການພັດທະນາ ເຊັ່ນ: ການພັດທະນາພື້ນຖານໂຄງລ່າງ, ການສ້າງແຜນງານ ແລະ ໂຄງການລະອຽດໃນການພັດທະນາເຂດ ແລະ ນຳສະເໜີຕໍ່ຄະນະຄຸ້ມຄອງເຂດ ແລະ ຂະແໜງການທີ່ກ່ຽວຂ້ອງ ເນື່ອງຈາກວ່າເຂດເສດຖະກິດພິເສດ ແຕ່ລະເຂດແມ່ນມີນະໂຍບາຍສົ່ງເສີມພິເສດ, ແຕ່ລະເຂດກໍ່ມີນະໂຍບາຍສົ່ງເສີມ ແລະ ຄຸ້ມຄອງທີ່ແຕກຕ່າງກັນ ໂດຍສະເພາະ ແມ່ນນະໂຍບາຍດ້ານພາສີອາກອນ ຫຼື ນະໂຍບາຍດ້ານການນຳໃຊ້ທີ່ດິນເຫຼົ່ານີ້ ເປັນຕົ້ນ.

ຊຶ່ງຜູ້ພັດທະນາຕ້ອງໄດ້ຂຶ້ນແຜນລະອຽດ ໃນການດຳເນີນການພັດທະນາ ເພື່ອສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງໃນການປະຕິບັດນະໂຍບາຍ. ການຄຸ້ມຄອງເຂດເສດຖະກິດພິເສດທີ່ເອກະຊົນເປັນຜູ້ລົງທຶນພັດທະນາພື້ນຖານໂຄງລ່າງນັ້ນ ກໍ່ຕ້ອງໄດ້ປະຕິບັດຕາມລະບຽບ, ບົດບັນທຶກຄວາມເຂົ້າໃຈ ແລະ ແຜນແມ່ບົດການພັດທະນາ, ປະຕິບັດຕາມດຳລັດ ແລະ ກົດ ໝາຍວ່າດ້ວຍການຄຸ້ມຄອງເຂດເສດຖະກິດພິເສດຢ່າງເຂັ້ມງວດ, ໝາຍຄວາມວ່າ ຜູ້ພັດທະນາເປັນເຈົ້າການໃນການຈັດຕັ້ງປະຕິບັດ ແລະ ດຳເນີນການພັດທະນາ ເຂດເສດຖະກິດພິເສດ ແລະ ບໍລິຫານຄຸ້ມຄອງຕາມທີ່ໄດ້ມີການຕົກລົງຮ່ວມກັນ. ໃນການບໍລິຫານເຂດແມ່ນປະກອບດ້ວຍພະນັກງານທີ່ມາຈາກພາກສ່ວນລັດ ແລະ ການບໍລິຫານວຽກງານນັ້ນ ແມ່ນປະຕິບັດຕາມສິດ ແລະ ໜ້າທີ່ ຕາມທີ່ໄດ້ຕົກລົງກັນ.

ແນວໃດກໍ່ຕາມ, ການພັດທະນາເຂດເສດຖະກິດພິເສດ ທີ່ຜູ້ພັດທະນາເປັນຜູ້ລົງທຶນພັດທະນາເອງທັດໝົດນັ້ນ , ເຫັນວ່າມີຄວາມສະດວກຫຼາຍດ້ານ ແລະ ເຮັດໃຫ້ວຽກງານການພັດທະນາ ດຳເນີນໄປຕາມແຜນທີ່ກຳນົດໄວ້ ແລະ ມີຄວາມວ່ອງໄວ. ເນື່ອງຈາກວ່າ ເອກະຊົນຜູ້ທີ່ຈະໄດ້ຮັບອະນຸມັດໃຫ້ພັດທະນາເຂດນັ້ນ ແມ່ນໄດ້ຜ່ານການຄັດເລືອກຕາມລະບຽບກົດໝາຍ ແລະ ມີຄວາມພ້ອມທາງດ້ານການພັດທະນາໃນລະດັບທີ່ສູງ ເປັນຕົ້ນ ແມ່ນຄວາມພ້ອມທາງ

ດ້ານງົບປະມານ, ປະສົບການ ແລະ ບົດຮຽນໃນການການພັດທະນາ ລວມທັງເຕັກໂນໂລຊີ ແລະ ວິຊາການ ທີ່ມີຄວາມຊຳນິນານສະເພາະດ້ານ, ແຕ່ໃນການດຳເນີນງານພັດທະນາຕົວຈິງນັ້ນ ຜູ້ພັດທະນາຕ້ອງໄດ້ມີການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ວຽກງານການພັດທະນາເຂດເສດຖະກິດພິເສດດຳເນີນໄປຕາມລະບຽບກົດໝາຍ ແລະ ເປັນໄດ້ຕາມ ແຜນແມ່ບົດການພັດທະນາ ແລະ ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້. ຊຶ່ງແຕ່ລະເຂດແມ່ນມີຄະນະຄຸ້ມຄອງເຂດ ຊຶ່ງຄະນະຄຸ້ມຄອງເຂດເປັນຜູ້ອຳນວຍຄວາມສະດວກ ແລະ ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນໃຫ້ການພັດທະນາດຳເນີນໄປຕາມແຜນທີ່ໄດ້ກຳນົດໄວ້, ຄະນະດັ່ງກ່າວນີ້ຈະປະຕິບັດຕາມສິດ ແລະ ໜ້າທີ່ທີ່ໄດ້ກຳນົດໄວ້ຕາມການຕົກລົງ ແລະ ລະບຽບທີ່ກ່ຽວຂ້ອງ.

**ເອກະສານອ້າງອີງ**


1. ກົດໝາຍວ່າການສົ່ງເສີມການລົງທຶນ, ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016, ມາດຕາ 61;
2. ດຳລັດວ່າດ້ວຍເຂດເສດຖະກິດພິເສດ, ສະບັບເລກທີ 188/ລບ, ລົງວັນທີ 7ມິຖຸນາ 2018, ມາດຕາ 29.